# ຂອບໃຈເພື່ອນຫຼັກເຈັດທຸກຄົນ

ໂດຍ: ບ່າວຫຼັກເຈັດ

ຂອບໃຈນຳພວກພ້ອງ    ນ້ອງພີ່ຊາວຫຼັກເຈັດ
ເຂດ ດາລັສ ເມືອງງາມ    ໄດ້ໄຕ່ຖາມຢາມຢື້
ສອງມື້ສອງຄືນນັ້ນ    ເຮົາສັງສັນປັນແບ່ງ
ລົງໄປສິ່ງມະນີແວງ    ຄວາມຮັກແພງບໍ່ງຊື້    ໃຫ້ເຮົານີ້ດ່ວນເຖິງ

ຍັງຮູ້ສຶກຊາບຊຶ້ງ    ຄືນທີຫນຶ່ງ ສາຍສມອນ
ແກ້ວລຳພອນ ກໍຄືກັນ    ລ້ຽງສັງສັນ ພາເຂົ້າ
ເຊີນຊວນກັນໂຮມເຕົ້າ    ຊຸມແຊວກັນຢູ່ບ້ານເພິ່ນ
ໂຫລະສັພ ຮຽກເອີ້ນ    ເຊີນກິນເຂົ້າ ຮ່ວມກັນ

ນ້ຳໃຈສອງເອື້ອຍນ້ອງນັ້ນ    ຜູກພັນຮ່ວມຊາວຫຼັກເຈັດ ອີ່ຫຼີໃດ໋
ລຸກເຮັດຄົວອາຫານ    ເພິ່ນຕຽມການ ແຕ່ຍັງເຊົ້າ
ເພື່ອຈັດຫາພາເຂົ້າ    ຮວມອາຫານຕັ້ງຫຼາຍເບື່ອງ
ມີຄົບເຄື່ອງກ້ອຍໄກ່ແກ້ມ    ແຖມຊອຍຊີ້ນຈ້ຳງຈ່ຽວບີ ຂົມເດ

ຈັດສັງສັນຄັ້ງນີ້    ມີຄັນຮ່ວມຫຼາຍຄົນ
ແກ້ວວົງວົນວົງວຽນ    ກໍຊ່ຽນມາຫາມົ້ງ
ຄຳສວົງ ຜູ້ມາຊ້າ    ກົງເວລາຜູ້ມາກ່ອນ
ນັ້ນຄືສິນຖາວອນ ຍັງສະອອນວາດເວົ້າ    ໃຫ້ເຮົາໄດ້ຊື່ນແຊວ

ຍັງຄະນຶງຢູ່ບໍ່ແລ້ວ    ນຳເອື້ອຍໃຫຍ່ ສົມສວັນ
ເພິ່ນສ້າງສັນໃຫ້ຄົນຫົວ    ຢ່າງແຊບນົວທຸກຄົນເຢີ້ຍ
ມີທັງເຂີຍ ທັງຫຼານພ້ອມ    ບໍ່ຍອມປະຄວາມມັກມ່ວນ

ຊວນໝູ່ຍໍຍົກເຫຼົ້າ    ເອົາໝົດແກ້ວເພິ່ນສັ່ງການ

ດົກສົມຄວນຕອນນັ້ນ    ຢ້ານພວກເພິ່ນຫິວນອນ
ສົມຖາວອນກໍເລີຍຊວນ    ໄປຕໍ່ຫວນເຮືອນໜ້າ
ຊັກພາຊວນກັນໄດ້    ກໍເລີຍໄປເຮືອນເພິ່ນ
ດື່ມກິນຈົນເດິກດື່ນ    ລື້ນຈົນແຊງກະພ່ອງນັ້ນ    ຈຶ່ງຫັນກ້າວຕ່າວໄປນອນ

ຂອບໃຈຄວາມຮັບຕ້ອນ    ຄຳພອນເພິ່ນຜູ້ໃຈດີ
ຄອບຄົວພັນທະມະນີ    ເພິ່ນຊ່າງມີນ້ຳໃຈແທ້
ເພິ່ນຊ່ວຍຫາທາງແກ້    ຫຼາຍໆແນວໄດ້ຊິດຊ່ວຍ
ບັນຫາໃຫຍ່ເຮັດໃຫ້ນ້ອຍ    ພາໃຫ້ຂ້ອຍໄດ້ຊ່ວງໃຈ    ຈິງແລ້ວ

ລາວຈັດການປີ້ຍົນໃຫ້    ສົມໃຈມັກມະນີແວງ
ຣາຄາແພງພໍປະມານ    ຊ່ວຍຈັດການໄດ້ຟຣີຊ້ຳ
ໜຳຍັງຈັດຫາໃຫ້    ເດີນທາງໄວໄປຮອດເດິ່ນ
ສ່ວນວ່ານາງຂັນເງິນ    ໂທເຕືອນເພື່ອນໃຫ້ຊ່ວຍເວົ້າ    ສາມໂມງເຊົ້າກໍບໍ່ວາງ

ຄືນຕໍ່ມາກໍບໍ່ວ້າງ    ຫາທາງຮ່ວມສັງສັນ    ອີກແລ້ວ
ຜູ້ຈັດການສົມຖາວອນ    ຕື່ນແຕ່ນອນກໍໂທເລັ້ງ
ຊ່ວງເສັງໂທຊວນເອີ້ນ    ເຊີນທຸກຄົນກັບມາຮ່ວມ    ອີກແລ້ວ
ຫົກໂມງແລງໃຫ້ມາຮວມ    ກິນລ້ຽງກັນຢູ່ນີ້    ດົນຕຣີພ້ອມກ່ອມບັນເລງ

ສົມຖາວອນໂທດ່ວນເລັ້ງ    ສະຫາຍເກົ່າຄືມານະ
ແກ້ວວົງວຽນດົງຫູມາ    ຢ່າໃຫ້ຕົງຄຸມໄວ້
ແສນດີໃຈໄດ້ເຫັນໜ້າ    ສຸມຸນທາ  ເອື້ອຍ  ມາຮ່ວມ
ສາຍສມອນ  ຜູ່ເປັນຮອງນາງງາມ    ຜົວບໍ່ນຳໄກວ່ສິ້ນ  ໄດ້ມາພ້ອມຮ່ວມກັນ

ສຳລັບຄືນນີ້ນັ້ນ		ພາກັນມ່ວນເຕັມທີ  ຈິງເດີ
ນັກດົນຕຣີຫຼາຍຄົນ		ມີທ່ານບຸນ ເປັນຫົວຫນ້າ
ຕົວຂ້ອຍເອງ ຈັບກີຕ້າຣ໌		ສິນຖາວອນ  ເຫຼັ້ນ ຄີບອຕຣ໌
ຮອດເພງມັກເບິ່ງເພິ່ນເຕັ້ຽ		ເມັຽລາວຮ້ອງສົ່ງເພງ  ມ່ວນໃດ໋

ວິສກີ້ ກໍແຫ່ງເລັ້ງ		ເບັຽນັ້ນແມ່ນ  ເຮັນນີງກັນ
ແຟນເພງພາກັນເມົາ		ເວົ້າລີ້ນແຂງຈົນຫຼົງສົ້ນ
ມີບາງຄົນນອນກັບພື້ນ		ຄັນມືນຕາຫົວເຂົ່າອ່ອນ
ທັງສອງນາງ ສາຍສມອນ  ແກ້ວລຳພອນເພິ່ນພັດຍ້ານ  ເລີຍໂຕນຮ້ານລັກຫນີ

ແກ້ວລຳພອນເປີດທີ່ລີ້		ຍ່າງລັດລັກເມືອນອນ
ສາຍສມອນກໍລາເມືອ		ຍ້ານເບື່ອເມົາເຫຼົ້າຫຼາຍແກ້ວ
ເມັຽຫມໍສິນ ເປັນ ເຫຍັ້ນ		ລົມແຕ່ເວັນຈົນເດິກດື່ນ
ຈົນວ່າຮອດທ່ຽງຄືນ  ຂ້ອຍຕ້ອງຕື່ນແຕ່ເຊົ້າ  ເລີຍລາເຈົ້າຕ່າວເມືອ

ຄົນນ້ຳໃຈເອື້ອເຟື້ອ		ເມືອສົ່ງຈົນເຖິງເຮືອນ
ແກ້ວວົງວຽນ ກັບມານະ		ເພິ່ນສົ່ງພາໃຫ້ເຖິງບ້ານ
ຍ້ານຕົວເອງໄດ້ນອນຫນ້ອຍ		ເພິ່ນເມົາຝອຍບໍ່ຢຸດຢ່ອນ
ເລີຍຂໍຕົວໄປພັກຜ່ອນ  ນອນເອົາຕາພໍເລັກນ້ອຍ  ເຕັມທີຂ້ອຍຜູ້ເມື່ອຍຫາວ

ຈົນສິບເອັດໂມງເຊົ້າ		ຟ້າວຈັດແຈ່ງ ຕຽມກັບຄືນ
ຕື່ນສຽງໂຫ ຄຳສວົງ		ຍ້ອນນັ່ງຊົງລົງງ້ວງ
ຫ່ວງຊິພາໄປລ້ຽງ		ຖຽງໂສກັນ ຍ້ອນກິນກ່ອນ
ເພາະວ່າເພິ່ນຕື່ນນອນ  ສວາຍເກີນໄປເລີຍເມື່ອຍຖ້າ  ຈຶ່ງຫາປັ້ນອີ່ມປະທັງ

ເປັນດັ່ງສົມໃຈຕັ້ງ ທຸກໆຢ່າງເປັນຕາມແຜນ

ແມ່ນວ່າພູມໃຈຫຼາຍ ໄດ້ພົບເຫັນກັນຫຼາຍຫນ້າ

ພາກັນມາໂຮມເຕົ້າ ຊາວຫຼັກເຈັດ ຢ່າງຖ້ວນຖີ່

ດ້ວຍຄວາມຮັກຄວາມສາມັກຄີ ພ້ອມທັງມີໃຈເອື້ອເຟື້ອ ລາເມືອບ້ານຂອ້ຍບໍ່ລືມ